# ເງິນອີເລັກໂທນິກຊ່ວຍໂລດລະບາດ (P-EBT) (P-EBT): ໂຄງການອາຫານ ຂອງໂຮງຮຽນ ແບບສຸກເສີນ
# ຄຳຖາມທີ່ມັກຖາມເປັນປະຈຳ

1. **P-EBT ແມ່ນຫຍັງ, ຫຼື ໂລດລະບາດ EBT ໂຄງການ ອາຫານ ຂອງໂຮງຮຽນ ແບບສຸກເສີນ?**
   ເນື່ອງຈາກ COVID-19, ເດັກທີ່ມີສິດຮັບອາຫານແບບບໍ່ເສຍຄ່າ ຫຼື ຫຼຸດລາຄາທີ່ໂຮງຮຽນໄດ້ຮັບເງິນຊ່ວຍເຫຼືອອາຫານເພີ່ມ. P-EBT ແມ່ນເງິນຊ່ວຍເຫຼືອດ້ານອາຫານໃໝ່ ແລະ ຊົ່ວຄາວເພື່ອຊ່ວຍຄອບຄົວຊື້ເຄື່ອງຂອງຕ່າງໆເພາະວ່າໂຮງຮຽນຖືກປິດ.

2. **ໃຜ ສາມາດໄດ້ຮັບ P-EBT?**
   ທຸກຄອບຄົວທີ່ມີລູກຮຽນຊັ້ນ k-12 ທີ່ມີສິດໄດ້ຮັບອາຫານຂອງໂຮງຮຽນແບບບໍ່ເສຍຄ່າ ແລະ ຫຼຸດລາຄາ – ລວມທັງເດັກທີ່ ໄປເຂົ້າໂຮງຮຽນ ທີ່ໄດ້ຮັບຂອງກິນ ແບບບໍ່ເສຍຄ່າ *ສຳລັບ* ນັກຮຽນທັງໝົດ.

   P-EBT ມີໃຫ້ນັກຮຽນທຸກຄົນໂດຍບໍ່ຄຳນຶງເຖິງສັນຊາດ ຫຼື ສະຖານະເຂົ້າເມືອງ. ຂໍ້ກຳນົດທີ່ຈຳເປັນແມ່ນເດັກນ້ອຍຕ້ອງມີສິດໄດ້ຮັບອາຫານຢູ່ໂຮງຮຽນໂດຍບໍ່ເສຍຄ່າ ຫຼື ຫຼຸດລາຄາ.

3. **ຖ້າລູກຂອງຂ້າພະເຈົ້າມີສິດ, ພວກຂ້າພະເຈົ້າຈະໄດ້ຮັບເງິນເທົ່າໃດ?**
   ຈຳນວນເງິນແມ່ນຂຶ້ນກັບຈຳນວນເດັກໃນເຮືອນຂອງທ່ານທີ່ໄດ້ຮັບອາຫານຢູ່ໃນໂຮງຮຽນທີ່ບໍ່ເສຍຄ່າ ຫຼື ຫຼຸດລາຄາ. ຈຳນວນເງິນຊ່ວຍເຫຼືອສູງສຸດແມ່ນ $399 ຕໍ່ເດັກໜຶ່ງຄົນ. ທ່ານຈະໄດ້ຮັບບັດ P-EBT ໜຶ່ງໃບສຳລັບຈຳນວນເດັກຂອງທ່ານທັງໝົດ (ຕົວຢ່າງ: ຖ້າທ່ານມີລູກ 3 ຄົນ, ທ່ານຈະໄດ້ຮັບບັດໜຶ່ງໃບທີ່ມີ $ 1,197).

   ບັນດາຄອບຄົວທີ່ມີເດັກທີ່ ມີສິດໄດ້ຮັບອາຫານແບບບໍ່ເສຍຄ່າ ຫຼື ຫຼຸດລາຄາ **ພາຍຫຼັງ** ໂຮງຮຽນຂອງເຂົາປິດຈະໄດ້ຮັບ **ໜ້ອຍ** ກວ່າ $399 ຕໍ່ເດັກໜຶ່ງຄົນ. ມັນກໍ່ຂຶ້ນກັບເມື່ອໃດທີ່ຄອບຄົວຂອງທ່ານສະໝັກຂໍອາຫານແບບບໍ່ເສຍຄ່າ ຫຼື ຫຼຸດລາຄາ. ເງິນຊ່ວຍເຫຼືອ P-EBT ($5.70 ຕໍ່ວັນ) ແມ່ນອີງຕາມຈຳນວນມື້ເຂົ້າຮຽນທີ່ໂຮງຮຽນປິດ:

   - ມີນາ - $68.40
   - ເມສາ - $125.40
   - ພຶດສະພາ - $119.70
   - ມິຖຸນາ - $85.50

4. **P-EBT ສາມາດມີຜົນກະທົບຫຍັງຕໍ່ສະຖານະຄົນເຂົ້າເມືອງຂອງຂ້າພະເຈົ້າບໍ່?**
   ບໍ່. ການສະໝັກ ຫຼື ການໃຊ້ P-EBT ຈະ <u>ບໍ່</u> ຫຍັງປ່ຽນແປງສະຖານະການເຂົ້າເມືອງຂອງພໍ່ແມ່ ຫຼື ເດັກແຕ່ງຢ່າງໃດ. P-EBT ແມ່ນ <u>ບໍ່</u>

ເກັບຄ່າທຳນຽມສາທາລະນະ.
ບໍ່ມີໃຜຈະຖາມທ່ານກ່ຽວກັບສະຖານະພາບການເຂົ້າເມືອງຫລືການເປັນພົນລະເມືອງຂອງລູກຂອງທ່ານເມື່ອທ່ານສະໝັກຂໍ P-EBT.

5. **ລູກຂອງຂ້າພະເຈົ້າຈະໄດ້ຮັບ P-EBT ແນວໃດ?**
   ມີສອງວິທີການໄດ້ຮັບ P-EBT:

   **ບັນດາຄອບົວທີ່ມີອາຫານພື້ນຖານ** (ສະແຕມອາຫານ): ລະຫວ່າງເດືອນ ມິຖຸນາ ວັນທີ 28 ແລະ ເດືອນ ກໍລະກົດ ວັນທີ 7, ເງິນຊ່ວຍເຫຼືອ P-EBT ຈະເພີ່ມເຂົ້າໄປໃນບັດ EBT ທີ່ທ່ານໃຊ້ແລ້ວ.

   **ບັນດາຄອບຄົວທີ່ມີເດັກທີ່ໄດ້ຮັບອາຫານຢູ່ໂຮງຮຽນໂດຍບໍ່ເສຍຄ່າຫຼື ຫຼຸດລາຄາ**: ທ່ານຕ້ອງສຳເລັດແບບຟອມສະໝັກແບບງ່າຍໆກ່ອນເດືອນ ສິງຫາ ວັນທີ 31 ຫຼື ເລີ່ມຕົ້ນສົກຮຽນ (ບໍ່ວ່າອັນໃດມາຮອດກ່ອນ).

6. **ສະໝັກ P-EBT ໄດ້ແນວໃດ?**
   ມີສອງວິທີການສະໝັກ:
   1. **ທາງອອນໄລນ໌:** www.WashingtonConnection.org (ຢູ່ທີ່ application, ເລືອກເອົາຊ່ອງ 'Pandemic EBT - Emergency School Meals Program' ໃນພາກການຊ່ວຍເຫຼືອດ້ານອາຫານ)




   2. **ທາງໂທລະສັບ:** 877-501-2233 (DSHS ສູນບໍລິການຕິດຕໍ່ລູຄ້າ – ມີການແປພາສາໃຫ້ພ້ອມ)

ເພື່ອສະໝັກ, ສຳລັບເດັກນ້ອຍແຕ່ລະຄົນທ່ານຕ້ອງຮູ້:

- ຊື່ຂອງໂຮງຮຽນຂອງລູກຂອງທ່ານ ຫຼື ສຶກສາເມືອງຂອງລູກຂອງທ່ານ
- ຊື່
  ແລະ ນາມສະກຸນ ຂອງລູກ ຂອງທ່ານ ໃຫ້ຖືກຕາມບັນທຶກຊື່ທີ່ລົງທະບຽນໃນໂຮງຮຽ
  ນ
- ວັນເດືອນປີເກີດ ຂອງເດັກ

**ເງິນຊ່ວຍເຫຼືອ P-EBT ທີ່ໄດ້ຮັບອະນຸມັດ**
**ຖ້າຂໍ້ມູນ ໃນໃບສະໝັກຂໍອາຫານໂຮງຮຽນຂອງລູກຂອງທ່ານ ຕົງຕາມຂໍ້ມູນ P-EBT ຂອງລູກຂອງທ່ານ ທີ່ສະໝັກກັບ DSHS.**
ທ່ານສາມາດເລືອກບ່ອນທີ່ຈະສົ່ງບັດ P-EBT ຂອງທ່ານໃສ່ໃບສະໝັກ P-EBT ຂອງທ່ານ. ຖ້າລູກຂອງທ່ານ (ບັນດາລູກ) ໄດ້ຮັບການອະນຸມັດ, ບັດ P-EBT ຂອງທ່ານຈະມາທາງໄປສະນີ 3-5 ວັນຫຼັງຈາກການອະນຸມັດ. ເນື່ອງຈາກພາລະຂອງໃບສະໝັກ, ມັນອາດໃຊ້ເວລາເຖິງ 30 ວັນລັດຖະການສໍາລັບການສະໝັກຂອງທ່ານ.




7. **ເມື່ອໃດເປັນມື້ປິດຮັບສະໝັກ P-EBT?**
   ທ່ານຕ້ອງສະໝັກພາຍໃນ ເດືອນສິງຫາ 31{t3, 2020, ຫຼື ກ່ອນ ເລີ່ມສົກຮຽນ 2020-21 (ສຸດແລ້ວວ່າອັນໃດຮອດນໍາຫຼັງ).

8. **ຂ້າພະເຈົ້າຈະຮູ້ໄດ້ແນວໃດວ່າຂ້າພະເຈົ້າໄດ້ຮັບການເຫັນດີ?**
   ທ່ານຈະ ໄດ້ຮັບ ບັດ P-EBT ທາງຈົດໝາຍກັບຂໍ້ມູນກ່ຽວກັບວິທີການໃຊ້ບັດ P-EBT ຂອງທ່ານ. (ເບິ່ງ #6 ສໍາລັບຂໍ້ມູນເພີ່ມເຕີມວິທີການສະໝັກ). ຂະບວນການອະນຸມັດອາດຈະດົນກວ່າຖ້າທ່ານມີສິດໄດ້ຮັບອາຫານໂຮງຮຽນແບບບໍ່ເສຍຄ່າ ຫຼື ຫຼຸດລາຄາ ຫຼັງຈາກປິດໂຮງຮຽນ.

   ຖ້າໃບສະໝັກ P-EBT ຂອງທ່ານຖືກປະຕິເສດ, ທ່ານຈະໄດ້ຮັບຈົດໝາຍສະບັບໜຶ່ງສົ່ງມາທາງໄປສະນີເພື່ອອະທິບາຍເຫດຜົນ ແລະ ຈະຂໍອຸທອນແນວໃດຖ້າທ່ານຄິດວ່າການປະຕິເສດແມ່ນບໍ່ຖືກຕ້ອງ.

9. **ຂ້າພະເຈົ້າຈະເຮັດແນວໃດເມື່ອໄດ້ຮັບບັດ P-EBT ທາງໄປສະນີ?**
   ເຮັດຕາມຄໍາແນະນໍາທີ່ມາພ້ອມບັດ P-EBT ຂອງທ່ານ. ທ່ານຈະໂທຫາ ແລະ ໃຫ້ລະຫັດຫັດໄປສະນີໃນໃບສະ ໝັກ P-EBT ເພື່ອເປີດໃຊ້ບັດ P-EBT ຂອງທ່ານ ແລະ ສ້າງເລກລະຫັດ PIN ສ່ວນຕົວຂອງທ່ານ. ເມື່ອບັດ P-EBT ຂອງທ່ານຖືກເປີດໃຊ້ແລ້ວ, ມັນສາມາດໃຊ້ເພື່ອຊື້ອາຫານຢູ່ໃນຮ້ານຂາຍເຄື່ອງຍ່ອຍສ່ວນຫຼາຍ, ຕະຫຼາດກະສິກໍາ, ແລະ

ທາງອອນໄລນ໌ຜ່ານ Amazon ແລະ
Walmart ໄດ້ດົນເຖິງໜຶ່ງປີຈາກວັນທີ່ທ່ານໄດ້ຮັບບັດ P-EBT ຂອງທ່ານ.

10. **ຈະເຮັດແນວໃດຖ້າບັດ P-EBT ຂອງພວກເຮົາມາຮອດດ້ວຍ ຈໍາ ນວນເງິນທີ່ບໍ່ຖືກຕ້ອງ?**
ຖ້າທ່ານຄິດວ່າຈໍານວນເງິນບໍ່ຖືກຕ້ອງໃຫ້ໂທຫາສູນບໍລິການລູກຄ້າທີ່ເບີ 877-501-2233.

11. **ເດັກຍັງສາມາດສືບຕໍ່ ໄດ້ຮັບ ອາຫານຈາກ ໂຮງຮຽນ ຫຼື ອົງການອື່ນໆຫຼືບໍ່ ຖ້າພວກເຮົາ ໄດ້ຮັບ P-EBT ແລ້ວ?**
ແມ່ນ. ເດັກຍັງໄດ້ຮັບອາຫານຈາກໂຮງຮຽນ **ແລະ** ໄດ້ຮັບ P-EBT. ພວກເຂົາແມ່ນໂຄງການຕ່າງຫາກ. ເງິນຊ່ວຍເຫຼືອ P-EBT ບໍ່ໄດ້ປ່ຽນແທນອາຫານຈາກໂຮງຮຽນ ຫຼື ອົງການອື່ນໆ.

12. **ຂ້າພະເຈົ້າຈະໄດ້ຮັບເງິນ P-EBT ແນວໃດ?**
ຄັ້ງດຽວ. P-EBT ບໍ່ແມ່ນເງິນຊ່ວຍເຫຼືອປະຈໍາເດືອນ, ຄືສະແຕມອາຫານ ຫຼື WIC.

13. **ຈະເຮັດແນວໃດຖ້າຂ້າພະເຈົ້າສະໝັກອອນລາຍ ແລະ ຍັງບໍ່ໄດ້ຮັບ ບັດ P-EBT ຂອງຂ້າພະເຈົ້າ ຫຼື ຂ້າພະເຈົ້າໄດ້ຮັບຈົດໝາຍປະຕິເສດໃບສະໝັກຂອງຂ້າພະເຈົ້າ?**
ໂທຫາສູນບໍລິການລູກຄ້າຂອງພະແນກສັງຄົມແລະສຸຂະພາບ (Department of Social and Health Services' (DSHS)) ທີ່ 877-501-2233.
ທ່ານສາມາດໂທຫາພວກເຂົາໄດ້ໃນລະຫວ່າງ 8 ໂມງເຊົ້າ ແລະ 5 ໂມງແລງ, ວັນຈັນເຖິງວັນສຸກ (ຍົກເວັ້ນວັນພັກລັດຖະການ).

14. **ຂ້າພະເຈົ້າສາມາດໃຊ້ເງິນ P-EBT ຊື້ຫຍັງໄດ້?**
ເງິນ P-EBT ຂອງທ່ານສາມາດຊື້ອາຫານໃນ ຮ້ານຂາຍເຄື່ອງຍ່ອຍທົ່ວໄປ ແລະ ຕະຫຼາດກະສິກໍາ, ຫຼື ຊື້ເຄື່ອງຍ່ອຍອອນໄລນ໌ໄດ້ທີ່ Amazon ແລະ Walmart.

P-EBT ບໍ່ສາມາດຊື້:

- ເຄື່ອງດື່ມທີ່ມີທາດເຫຼົ້າ
- ສິນຄ້າທີ່ບໍ່ແມ່ນອາຫານ (ເຊັ່ນເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງໃຊ້ໃນຫ້ອງນໍ້າ)
- ອາຫານຮ້ອນທີ່ປຸງບໍ່ສຸກ
- ຢາ ແລະ ວິຕາມິນ

ໃຊ້ບັດ EBT ຂອງທ່ານຄືກັບບັດເດບິດ:
- ເລືອກ "EBT"
- ຮູດບັດ P-EBT ຂອງທ່ານ
- ປ້ອນລະຫັດ PIN ສ່ວນຕົວຂອງທ່ານ

15. **ຂ້າພະເຈົ້າຈໍາເປັນຕ້ອງໃຊ້ເງິນ P-EBT ຂອງຂ້າພະເຈົ້າໃຫ້ໝົດເມື່ອຂ້າພະເຈົ້າໄດ້ຮັບບັດບໍ່?**

ບໍ. ບັດເງິນຊ່ວຍເຫຼືອ P-EBT
ຂອງທ່ານສາມາດໃຊ້ໄດ້ຍາວນານເຖິງໜຶ່ງປີນັບຈາກວັນທີ່ທ່ານໄດ້ຮັບບັດຂອງທ່ານ.

16. **ຂ້າພະເຈົ້າຈະໂທຫາໃຜຖ້າຂ້າພະເຈົ້າມີຄຳຖາມ?**
ໂທຫາ 877-501-2233 (ສູນຕິດຕໍ່ ບໍລິການລູກຄ້າ ຂອງ DSHS)
8ໂມງເຊົ້າ - 5ໂມງແລງ, ວັນຈັນເຖິງວັນສຸກ (ຍົກເວັ້ນວັນພັກລັດຖະການ)

ຖ້າທ່ານມີຄຳຖາມກ່ຽວກັບສະຖານະເຂົ້າເມືອງຂອງທ່ານ ແລະ
ເງິນຊ່ວຍເຫຼືອດ້ານອາຫານນີ້, ທ່ານອາດຈະປຶກສາກັບທະນາຍຄວາມຄົນເຂົ້າເມືອງ.
ອົງການຈັດຕັ້ງເຫຼົ່ານີ້ຮູ້ກ່ຽວກັບ P-EBT ແລະ ກົດໝາຍຄົນເຂົ້າເມືອງ;
ພວກເຂົາສາມາດຕອບຄຳຖາມຂອງທ່ານໄດ້.

- ໂຄງການສິດທິຄົນເຂົ້າເມືອງຕາເວັນຕົກສ່ຽງເໜືອ (Northwest Immigrant Rights Project (NWIRP)) Seattle Office: 206-587-4009
- NWIRP Yakima Valley (Granger) Office: 509-854-2100
- NWIRP Wenatchee Office: 509-570-0054
- NWIRP Tacoma South office: 206-816-3893

17. **ຈະເຮັດແນວໃດສຳລັບຄອບຄົວທີ່ມີລາຍໄດ້ທີ່ບໍ່ໄດ້ຮັບອາຫານພື້ນຖານ ຫຼື ອາຫານໂຮງຮຽນແບບບໍ່ເສຍຄ່າ ຫຼື ຫຼຸດລາຄາ, ເນື່ອງຈາກໄດ້ຮັບເງິນຊ່ວຍເຫຼືອ P-EBT?**
ບັນດາຄອບຄົວທີ່ມີເດັກຢູ່ໃນເກນອາຍຸ ທີ່ຕົກງານ ຫຼື ເສຍລາຍຮັບ
ອາດເຕີມໃບສະໝັກຂໍອາຫານໂຮງຮຽນແບບບໍ່ເສຍຄ່າ ຫຼື
ຫຼຸດລາຄາ ຜ່ານຫ້ອງການສຶກສາເມືອງຂອງທ່ານ **ກ່ອນ** ເດືອນມິຖຸນາວັນທີ30 ແລະ **ກ່ອນ**
ທ່ານຂໍ P-EBT. ທ່ານອາດ ສະໝັກອາຫານພື້ນຖານກ່ອນເດືອນ ມິຖຸນາ ວັນທີ 30
ທາງອອນໄລນ໌ (www.WashingtonConnection.org) ຫຼື ທາງໂທລະສັບ (877-501-2233 – DSHS ສູນຕິດຕໍ່ລູກຄ້າ). ຖ້າທ່ານໄດ້ຮັບການອະນຸມັດສຳລັບອາຫານພື້ນຖານ,
ທ່ານກໍ່ຈະໄດ້ຮັບເງິນຊ່ວຍເຫຼືອ P-EBT ສຳລັບເດັກອາຍຸເຂົ້າໂຮງຮຽນຂອງທ່ານ.

ຖ້າທ່ານໄດ້ຮັບການອະນຸມັດສຳລັບອາຫານພື້ນຖານ ຫຼື ອາຫານແບບບໍ່ໄດ້ເສຍຄ່າ
ແລະຫຼຸດລາຄາ ຫຼັງຈາກໂຮງຮຽນປິດລົງ ແລະ ກ່ອນວັນທີ 30 ມິຖຸນາ 2020, ເງິນຊ່ວຍເຫຼືອ
P-EBT ຂອງທ່ານຈະຖືກປະເມີນ.

ພະແນກກະສິກຳຂອງສະຫະລັດ (United States Department of Agriculture (USDA))
ຄຳຖະແຫຼງການບໍ່ຈຳແນກກັນ
*ສະຖາບັນນີ້ແມ່ນຜູ້ໃຫ້ໂອກາດທີ່ເທົ່າທຽມກັນ.*